GCI

# ບົດທີ 10
# ການສ້າງຕັ້ງຄຣິສຕະຈັກ

ບົດນຳ:

ວັດຖຸປະສົງໃນການສຶກສາ:

- ເພື່ອເຂົ້າໃຈໃນຄວາມຈຳເປັນໃນການຕັ້ງຄຣິສຕະຈັກ.
- ເພື່ອຄົ້ນພົບຫລັກການພະຄຳພີໃນການຕັ້ງຄຣິສຕະຈັກ.
- ສຶກສາເຖິງຂະບວນການໃນການຕັ້ງຄຣິສຕະຈັກ.
- ເພື່ອເຂົ້າໃຈເຖິງວິທີການໃນການຕັ້ງຄຣິສຕະຈັກໃນປະຈຸບັນ.
- ເພື່ອເຂົ້າໃຈເຖິງຄວາມກົດດັນ ແລະອຸປະສັກຂອງການຕັ້ງຄຣິສຕະຈັກ.

ໂຄງຮ່າງບົດຮຽນ

## I. ບົດນຳ

ກ. ຄຣິສຕະຈັກຄືອັນໃດ.
ຂ. ເປັນຫຍັງຕ້ອງຕັ້ງຄຣິສຕະຈັກໃຫມ່.
ຄ. ວິທີການປະຕິບັດໃນການຕັ້ງຄຣິສຕະຈັກໃຫມ່.

## II. ຫລັກການພື້ນຖານຕາມພະຄຳພີຂອງການຕັ້ງຄ.ຣິສຕະຈັກ

ກ. ການຮັບມອບໝາຍງານຂອງຄົນຕັ້ງຄຣິສຕະຈັກ
   1. ທີ່ຈະເຮັດວຽກຕາມພະມະຫາບັນຊາຂອງພະເຈົ້າ.
   2. ທີ່ຈະຊ່ວຍຄົນຂອງພະເຈົ້າມີຄວາມມັ່ນໝັ້ນທີ່ຈະເຮັດໃນ 3 ປະການ.
   3. ທີ່ຈະສ້າງ ແລະຈັດລະບຽບແກ່ຜູ້ເຊື່ອໃນຄຣິສຕະຈັກ.

ຂ. ຂໍ້ກຳນົດທົ່ວໄປຂອງຜູ້ຕັ້ງຄຣິສຕະຈັກ: ຕາມຫລັກການພະຄຳພີ 5 ປະການ.
ຄ. ຂໍ້ກຳນົດພິເສດຂອງຜູ້ຕັ້ງຄຣິສຕະຈັກ: ທີ່ມີຄຸນນະພາບມີ 11 ປະການ.

## III. ວິທີປະຕິບັດໃນການຕັ້ງຄຣິສຕະຈັກ

ກ. ຕັດສິນໃຈວ່າຈະເກັບກ່ຽວບ່ອນໃດທີ່ມີຄວາມພ້ອມທີ່ຈະເກັບກ່ຽວຫລືເກັບກ່ຽວໄດ້ໂດຍໄວ.
ຂ. ເຮົາຕ້ອງຄົ້ນພົບ ແລະມັ່ງໝັ້ນໃນກຸ່ມທີ່ມີການຕອບສະໜອງທີ່ດີ.
ຄ. ການສ້າງຕັ້ງຄຣິສຕະຈັກຄວນສ້າງຕັ້ງໃນບ່ອນທີ່ມີດິນອຸດົມ (ດິນດີ).
ງ. ການຕັ້ງຄຣິສຕະຈັກທີ່ດີທີ່ສຸດຈະເຮັດກັບກຸ່ມຜູ້ໃຫຍ່.
ຈ. ຢ່າປ່ຽນແນວແລະກາຍເປັນຂໍ້ຫຍຸ້ງຍາກໃນກິດຈະກຳທີ່ບໍ່ເກີດຜົນ.
ສ. ຈັດລະບຽບການນຳສະເໜີຂອງທ່ານໃຫ້ດີ.
ຊ. ເຮັດສິ່ງຕ່າງໆໃຫ້ງ່າຍ.
ຍ. ຢ່າເຮັດສຽງດັງຫລາຍຈົນເກີນໄປເມື່ອຢູ່ໃນພື້ນທີ່ຈຳກັດ ຫລືໃນຊຸມນະບົດ.
ດ. ເລືອກຍິງຊາຍທີ່ມີຄວາມຖ່ອມໃຈໃນການທຳງານຮ່ວມກັບທ່ານ.
ຕ. ໃຊ້ຊັບພະຍາກອນທີ່ທ່ານມີຢູ່ຢ່າງກວ້າງຂວາງ. (ໃຫ້ເກີດປະໂຫຍດສູງສຸດ)

GCI

## IV. ວິທີການຕັ້ງຄຣິສຕະຈັກໃນປະຈຸບັນນີ້

ກ. ຕັ້ງຄຣິສຕະຈັກໃນລັກສະນະຄຣິສຕະຈັກແມ່ - ຄຣິສຕະຈັກລູກ.
ຂ. ໃຊ້ວິທີການກຸ່ມສຶກສາພະຄຳພີ.
ຄ. ກຸ່ມເຊລໂດຍວິທີການຂະຫຍາຍແບບທະວີຄູນ.
ງ. ຂະຫຍາຍຜ່ານທາງສະມາຄົມທ້ອງຖິ່ນຕ່າງໆ.
ຈ. ຜູ້ບຸກເບີກຄຣິສຕະຈັກເປັນຜູ້ປຸກສ້າງ ເລີ້ມສຳຫລອດ (ຜູ້ຕັ້ງຄຣິສຕະຈັກເລີ້ມສຳຫລອດກ່ອນ)
ສ. ອອກໄປເທດສະໜາສັ່ງສອນ.
ຊ. ກຸ່ມສະມາຊິກກຸ່ມທີ່ສອງໃນອາຄານດຽວກັນ.
ຍ. ມີອີກຄຣິສຕະຈັກນຶ່ງໃນອາຄານດຽວກັນ.
ດ. ກຸ່ມບໍລິວານສະມາຊິກຄຣິສຕະຈັກ.

## V. ປະເຊີນກັບບັນຫາອຸປະສັກ ແລະຄວາມກົດດັນ

ກ. ສະພາວະຄວາມກົດດັນໃນຝ່າຍຈິດວິນຍານໃນການຕັ້ງຄຣິສຕະຈັກ.
ຂ. ຄວາມກົດດັນທາງດ້ານອາຊີບ ໃນການຕັ້ງຄຣິສຕະຈັກ.

## VI. ຫລັກການພື້ນຖານທີ່ຈະເຮັດໃຫ້ຄຣິສຕະຈັກຈະເລີນເຕີບໃຫຍ່

ກ. ການຈະເລີນເຕີບໃຫຍ່ຝ່າຍວິນຍານ.
ຂ. ການຈະເລີນເຕີບໃຫຍ່ທາງດ້ານຈຳນວນຕົວເລກ.
ຄ. ການຈະເລີນເຕີບໃຫຍ່ທາງດ້ານພູມສາດ.

## VII. ສ້າງຕັ້ງຄຣິສຕະຈັກໃນຄວາມເປັນທ້ອງຖິ່ນເດີມຂອງເຂົາ (ເປັນຂອງພື້ນເມືອງ)

ກ. ຫລັກການການສ້າງຕັ້ງຄຣິສຕະຈັກກັບຄົນພື້ນເມືອງ.
ຂ. ມີຄວາມຍາກລຳບາກໃນການຕັ້ງຄຣິສຕະຈັກ.

# I. ບົດນຳ

**ມັດທາຍ 28:19-20, ມາຣະໂກ 16:15, ໂຣມ 1:16**

*ໂຣມ 1:16*
*ເພາະວ່າເຮົາບໍ່ມີຄວາມລະອາຍໃນຂ່າວປະເສີດ ດ້ວຍວ່າຂ່າວປະເສີດນັ້ນເປັນລິດເດດຂອງພະເຈົ້າ ເພື່ອໃຫ້ທຸກຄົນທີ່ເຊື່ອໄດ້ຮັບຄວາມພົ້ນ, ພວກຢິວກ່ອນແລະພວກຕ່າງຊາດດ້ວຍ.*

*ອອກໄປ, ອອກໄປ, ອອກໄປ*

- **ມຸມມອງຂອງກຸ່ມປະເພນີ**
  ຕັ້ງຄຣິສຕະຈັກໃນຕຳແໜ່ງທີ່ແຂງແຮງກ່ອນສ້າງຫົວໃຈໃນການເຮັດພັນທະກິດ ຫລັງຈາກນັ້ນຈຶ່ງວາງແຜນງານພັນທະກິດນີ້ເປັນວິທີການທີ່ອັນຕະລາຍຫລາຍ ຊຶ່ງປັດສະຈາກຫລັກການເຮັດພັນທະກິດທີ່ເຂັ້ມແຂງໃນພະມະຫາບັນຊາເຊນດຽວກັບທີ່ໄດ້ບັນລຸໃນວິທີການຫລາກຫລາຍພັນທະກິດອື່ນໆ ກໍມີການແຂ່ງຂັນກັນຫລາຍກວ່າທີ່ຈະເຮັດໃຫ້ພະມະຫາບັນຊາຂອງພະເຈົ້າສຳເລັດລົງ.

- **ມຸມມອງຂອງພະຄຳພີ**
  ສິ່ງຈຳເປັນເລັ່ງດ່ວນຄື ມີເອກະສານຂໍ້ມູນຂອງພື້ນທີ່ພາກສະໜາມເປັນຢ່າງດີ

  *"ທ່ານທັງຫລາຍວ່າອີກສີ່ເດືອນຈະເຖິງລະດູກ່ຽວເຂົ້າບໍ່ແມ່ນຫລືເຮົາບອກທ່ານທັງຫລາຍວ່າ ເງີຍໜ້າຂຶ້ນເບິ່ງນາເຖີດວ່າ ທົ່ງນາເຫລືອງອະລ່າມ ເຖິງເວລາກ່ຽວແລ້ວ ຄົນກ່ຽວກໍກຳລັງໄດ້ຮັບຄ່າຈ້າງ ແລະກຳລັງສະສົມພືດຜົນໄວ້ສຳລັບຊີວິດອັນຕະຫລອດໄປເປັນນິດ ເພື່ອຄົນຫວ່ານ ແລະຄົນກ່ຽວຈະຊື່ນຊົມຍິນດີນຳກັນ. **ໂຢຮັນ 4:35-36***

- ພະມະຫາບັນຊາຕ້ອງປົກຄອງພັນທະກິດຄຣິສຕະຈັກທັງໝົດ ຫລືທຸກໆພະແນກ ແລະໃນສ່ວນບຸກຄົນເປັນຫລັກ ການພັນທະກິດຂອງຄຣິສຕະຈັກ.

  "ຄຣິສຕະຈັກຕັ້ງຂຶ້ນເພື່ອຈະຕອບສະໜອງພະມະຫາບັນຊາໃນການນຳຂ່າວປະເສີດແຫ່ງພະເຢຊູຄຣິສເຈົ້າໂດຍຜ່ານທາງການມີສ່ວນຂອງສະມາຊິກແຕ່ລະຄົນບໍ່ວ່າຈະເປັນທາງກົງຫລືທາງອ້ອມໃນການຕອບສະໜອງ ແລະສະໜັບສະໜູນໃນງານພັນທະກິດ"

- ຄຳສັ່ງ 4 ປະການ ບໍ່ໄດ້ເຮັດໃນຄາລະວາດໂດຍຄາລະວາດ ມັນຄວນຈະເຮັດພ້ອມກັນໃນເວລາດຽວແມ່ນວ່າຄຳສັ່ງຂັ້ນສຸດທ້າຍຈະໃຊ້ເວລາດົນກວ່ານຶ່ງໃນສາມຂອງຄຳສັ່ງສາມາດເຮັດໄດ້ຢ່າງງ່າຍໆ ດ້ວຍຄວາມເຊື່ອ ແລະການເສັຽສະຫລະດ້ວຍຄວາມສະບາຍໃນການເດີນທາງ, ການພັດທະນາຄວາມສຳພັນໃນການເງິນຂອງ ຄຣິສຕະຈັກ ແລະທັງສິ້ນຊຶ່ງຈະສຳເລັດເພີ່ມທະວີຄູນໃນອັນສຸດທ້າຍເມື່ອຄຣິສຕະຈັກຕ່າງໆ ຮູ້ສຶກເຖິງຄວາມ ເລັ່ງດ່ວນຫລາຍຂຶ້ນ ແລະຫລາຍຂຶ້ນ.

  *"ແຕ່ທ່ານທັງຫລາຍຈະໄດ້ຮັບພະຣາຊະທານລິດເດດເມື່ອພະວິນຍານບໍລິສຸດຈະສະເດັດມາຍັງທ່ານ ແລະທ່ານ ທັງຫລາຍຈະເປັນພະຍານຝ່າຍເຮົາໃນກຸງເຢລູຊາເລັມທີ່ແຂວງຢູດາ ແລະແຂວງຊາມາເລັຽ ແລະທີ່ສຸດປາຍ ແຜ່ນດິນໂລກ" ກິດຈະການ 1:8*

GCI

## *ກ. ຄຣິສຕະຈັກຄືອັນໃດ*

ຄຣິສຕະຈັກທ້ອງຖິ່ນອາດຈະອະທິບາຍໄດ້ໃນລັກສະນະ 4 ປະການ

1. ເປັນ**<u>ສະຖານທີ່ປະຊຸມ</u>**ຂອງຜູ້ເຊື່ອໃນທ້ອງຖິ່ນ ມີການພົບປະກັບອົງພະເຢຊູຄຣິດເປັນການສ່ວນຕົວ ເພື່ອນະມັດສະການພະອົງ.

2. ເປັນ**<u>ການສາມັກຄີທຳ</u>**ໃນຄອບຄົວ

3. ເປັນໂຮງຮຽນແຫ່ງ**<u>ການສ້າງສາວົກ</u>**

4. ເປັນການຈັດການເພື່ອອອກໄປ**<u>ປະກາດຂ່າວປະເສີດ</u>**ຢ່າງເຂັ້ມແຂງ.

## *ຂ. ເປັນຫຍັງຕ້ອງຕັ້ງຄຣິສຕະຈັກໃຫມ່?*

1. ເປັນຫລັກການຂອງການຂະຫຍາຍພັນ *"ແລະແຕ່ລະຕົ້ນອອກຜົນມີເມັດໃນຜົນຕາມຊະນິດຂອງມັນ"* ປະຖົມມະການ 1:12

   ກ. ອານາຈັກຂອງພືດ ແລະສັດ.

   ພະຄຳພີໄດ້ນັບເຖິງການຊົງສ້າງຕາມຫລັກການຂອງ**ການຂະຫຍາຍພັນ** - "ຕາມແຕ່ລະຊະນິດຂອງມັນ" -ເປັນຄວາມຈິງສຳລັບພືດ ທີ່ເກີດຜົນຕາມຊະນິດຂອງມັນ (ເບິ່ງໃນ 1:11) ແລະກໍເປັນຄວາມຈິງສຳຫລັບອານາຈັກຂອງສັດ. (ປະຖົມມະການ1:24)

   ຂ. ການຂະຫຍາຍຜົນຂອງຄຣິສຕະຈັກ.

   ໃນໝາກແອບເປີ້ນເປັນຕົ້ນໝາກແອບເປີ້ນ,ແກະອອກລູກເປັນແກະນີ້ເປັນຫລັກການຂອງການຂະຫຍາຍ ຜົນຢ່າງວິເສດຫລາຍຂອງ"ຊີວິດທີ່ໃຫ້ກຳເນີດຊີວິດ" ເປັນຫລັກການເໝືອນກັນກັບພັນທະກິດຂອງການ ປະກາດພະກິດຕິຄຸນຂອງອົງພະເຢຊູຄຣິສເຈົ້າ ການເປັນພະຍານຂອງຄຣິສຕຽນ ການຫວ່ານເມັດແຫ່ງ ພະວັດຈະນະຢ່າງຫລວງຫລາຍ ເອື້ອອຳນວຍໃຫ້ຄົນໄດ້ກັບໃຈນຳດວງວິນຍານແດ່ພະຄຣິດເປັນເຄື່ອງ ຢືນຢັນຂອງການຂະຫຍາຍຜົນຂອງຄຣິສຕະຈັກ.

2. ມັນເປັນທຳມະຊາດຂອງການເກີດຜົນທີ່ອອກມາຂອງ **ພະມະຫາບັນຊາ** ມັດທາຍ 28:18–20, ມາຣະໂກ 16:15

3. ເປັນການເກີດຜົນຢ່າງມີຄວາມໝາຍ ຂອງການນຳພະມະຫາບັນຊາອອກໄປ

4. ເປັນການຕຽມຍຸດທະວິທີສຳຄັນສຳລັບ "ການພັດທະນາຊຸມຊົນ"

5. ເປັນຄວາມຈຳເປັນໃນທຸກໆແຫ່ງ

   ກ. ໃນຊຸມຊົນທີ່**<u>ຂ່າວປະເສີດໄປບໍ່ເຖິງ</u>** (ພື້ນທີ່ໃຫມ່)

   ຂ. ໃນ**<u>ເມືອງໃຫຍ່</u>** ສູນກາງ (ພື້ນທີ່ເກົ່າ)

6. ເປັນການອະນຸຍາດໃຫ້**<u>ຜູ້ນຳ</u>**ໃຫມ່ໄດ້ພັດທະນາຕົນເອງ

GCI

## *ຄ. ການປະຕິບັດການໃນການຕັ້ງຄຣິສຕະຈັກ*

**ບໍ່ພຽງແຕ່ຫລັກການຂອງພະຄໍາພີເທົ່ານັ້ນ ແຕ່ເປັນການປະຕິບັດພ້ອມ**

ການຕັ້ງຄຣິສຕະຈັກບໍ່ພຽງແຕ່ກ່າວໃນພະຄໍາພີເທົ່ານັ້ນ ແຕ່ສະແດງອອກໃນການປະຕິບັດວ່າ ເປັນວຽກທີ່ຕ້ອງເຮັດ

**ຊາເລສ ຊາເນ (Charles Chaney) ໄດ້ກ່າວວ່າ** *"ການຕັ້ງຄຣິສຕະຈັກເປັນສິ່ງສໍາຄັນຫລາຍ ບໍ່ພຽງ ເພາະວ່າມັນເປັນພື້ນຖານຕາມພະຄໍາພີເທົ່ານັ້ນ ແຕ່ຍັງເປັນເພາະວ່າມັນເປັນການປະກາດນີສະຖານທີ່ຂອງຕົນເອງ ແຕ່ວິທີທີ່ໄດ້ຜົນຫລາຍທີ່ສຸດກໍ່ຄືການຕັ້ງຄຣິສຕະຈັກຕາມພະຄໍາພີໃຫມ່ໃນທຸກພື້ນທີ່ຂອງທຸກໆເມືອງ*

**ແອລເມີທາວ (Elmer Towns) ກ່າວເສີມວ່າ** *"ທຸກຮູບແບບຂອງການປະກາດນີສະຖານທີ່ຂອງຕົນເອງ ແຕ່ວິທີທີ່ໄດ້ຜົນຫລາຍທີ່ສຸດກໍ່ຄື ການສ້າງຕັ້ງຄຣິສຕະຈັກຕາມພະຄໍາພີໃຫມ່ໃນທຸກບ່ອນທຸກທີ່ຂອງທຸກໆ ເມືອງ.*

1. ຄວາມທ້າທາຍຂອງຄຣິສຕະຈັກ:

   ກ) **ການຈະເລີນເຕີບໃຫຍ່ໃນດ້ານຈໍານວນ**ຂອງຜູ້ທີ່ບໍ່ເຄີຍໄດ້ຍິນຂ່າວປະເສີດ.

   ຂ) ການເພີ່ມຈໍານວນຕົວເລກຂອງ**ຜູ້ຮັບໃຊ້ຂອງຄຣິສຕຽນ** ຖ້າບໍ່ເຊັ່ນນັ້ນ ກໍຈະເພີ້ມຈໍານວນສະເພາະແຕ່ລູກຫລານຄຣິສຕຽນເທົ່ານັ້ນ.

   ຄ) ຜູ້ທີ່ເຮັດໃຫ້ **ຄຣິສຕຽນບໍ່ສາມາດຮຽກຮ້ອງສິດ** ຢ່າງໃດໄດ້ ຄືກຸ່ມຂອງ ຜູ້ທີ່ບໍ່ເຊື່ອພະເຈົ້າ, ກຸ່ມສຶກສາດ້ານມະນຸດຊາດ, ກຸ່ມມາກຊິດ, ກຸ່ມວັດຖຸນິຍົມ, ອື່ນໆ

2. ອົງປະກອບທາງດ້ານ ຈໍານວນປະຊາກອນ:

   ອົງປະກອບທາງດ້ານຈໍານວນປະຊາກອນທີ່ປາກົດຢູ່ທົ່ວໂລກ ອົງປະກອບນີ້ມີຜົນກະທົບຕໍ່ຍຸດທະສາດຂອງການ ຕັ້ງຄຣິສຕະຈັກ

   ກ. ວິຖີຊີວິດແບບຄົນໃນເມືອງ

   ນຶ່ງໃນອົງປະກອບຫລັກ ຄື ການຫລັ່ງໄຫລຂອງຄົນຊົນນະບົດເຂົ້າມາສູ່ໃນເມືອງໃຫຍ່ ເລີ້ມຕົ້ນສັດຕະວັດທີ່ 20 ປະຊາກອນໂລກທີ່ອາໄສຢູ່ໃນເມືອງໃຫຍ່ ແລະເມືອງຫລວງມີຈໍານວນເພີ້ມຂຶ້ນເຖິງ 87% ແລະມີພຽງ 13% ເທົ່ານັ້ນທີ່ຍັງຄົງອາໄສຢູ່ໃນຊົນນະບົດ

   ໃນເມືອງເປັນນຶ່ງໃນພື້ນທີ່ຂະໜາດໃຫຍ່ ທີ່ຄຣິສຕະຈັກໃນປະຈຸບັນນີ້ໃຊ້ເປັນຈຸດໃນການປະກາດຫລາຍໆ ພື້ນທີ່ມີອີກຫລາຍໆພື້ນທີ່ທີ່ຄຣິສຕະຈັກໄດ້ປະຖິ້ມຕົວເມືອງ ແລະຖອຍໄປຍັງຊານເມືອງ ຫລື ຊົນນະບົດທີ່ ໄດ້ຮັບການສົ່ງເສີມ ຫາກຊ່ວງຊີວິດຂອງເຮົາຕ້ອງການທີ່ຈະເຮັດງານພັນທະກິດພາກສະໜາມໃນການຕັ້ງຄຣິສຕະຈັກ, ສະຖານທີ່ນັ້ນກໍໜ້າຈະເປັນເມືອງໃຫຍ່ ຫລືໃນເຂດນະຄອນຫລວງ.

   ຂ. ການຫລັ່ງໄຫລຂອງປະຊາກອນ (ການເຄື່ອນໄຫວຂອງປະຊາກອນ)

   ປັດໃຈໃນການສຶກສາເລື່ອງປະຊາກອນອື່ນໆໃນຊຸມຊົນຂອງເຮົາ ກໍຄື ການເຄື່ອນໄຫວຂອງປະຊາກອນ.

GCI

**ທ່ານ ເອສລາ ໂຈເນສ (Ezra Jones)** ໄດ້ພິຈາລະນາເຖິງປັດໃຈສຳຄັນທີ່ເປັນການປະເມີນພື້ນທີ່ເປົ້າໝາຍສຳຫລັບການຕັ້ງຄຣິສຕະຈັກໃໝ່ ທ່ານກ່າວວ່າ *"ຕາບໃດທີ່ຄົນຍັງເຄື່ອນໄຫວຢູ່ ການຕັ້ງຄຣິສຕະຈັກໃໝ່ ກໍມີຄວາມຈຳເປັນທີ່ຈະໃຫ້ມີຂຶ້ນ"*

ທ່ານ ຮອດເກສ (Hodges) ກ່າວວ່າ *"ໂດຍປົກກະຕິແລ້ວ ຄົນເຮົາຈະເປີດໃຈຮັບເອົາພະກິດຕິຄຸນເປັນພິເສດ ຄືໃນຊ່ວງເວລາທີ່ຄົນໄດ້ເຮົາຕ້ອງຈາກໝູ່ເພື່ອນ, ຍາດພີ່ນ້ອງໃນບ້ານເກີດເມືອງນອນໄປຢູ່ໃນສະພາບແວດລ້ອມໃໝ່. ເຂົາອາດຈະຮູ້ສຶກເປັນອິດສະລະຈາກເຄື່ອງຜູກມັດທີ່ຢູ່ໃນສັງຄົມເດີມທີ່ອາດຈະເປັນອຸປະສັກສຳລັບເຂົາ. ເຖິງຢ່າງໃດກໍຕາມ, ພວກເຮົາໄດ້ພົບວ່າ ຄຣິສຕະຈັກພວກເຮົາໄດ້ເພະວິຄູນຈຳນວນສະມາຊິກໃໝ່ຢ່າງວ່ອງໄວ ໃນການເຮັດພັນທະກິດປະກາດຂ່າວປະເສີດ ຕໍ່ຄົນພັດຖິ່ນຖານເຫລົ່ານີ້"*

## II. ຫລັກການພື້ນຖານຕາມພະຄຳພີຂອງການຕັ້ງຄຣິສຕະຈັກ

### *ກ. ການກຳນົດງານຂອງຜູ້ຕັ້ງຄຣິສຕະຈັກ*

1. ບ່ອນຈະເຮັດງານຕາມພະມະຫາບັນຊາ

    ກ. ຂະຫຍາຍເຂົ້າໄປສູ່ໃນພື້ນທີ່ໃຫຍ່

    ຂ. ສ້າງຄວາມສຳພັກັບຜູ້ຄົນໂດຍການເປັນພະຍານ

    ຄ. ເທດສະໜາຂ່າວປະເສີດແຫ່ງອົງພະເຢຊູເຈົ້າ

    ງ. ນຳຄວາມພົ້ນໄປສູ່ຜູ້ທີ່ບໍ່ເຊື່ອ

    ຈ. ໃຫ້ເຂົາຮັບບັບຕິດສະມາດ້ວຍພະວິນຍານບໍລິສຸດ ແລະດ້ວຍນ້ຳ

    ສ. ສອນເຂົາໃຫ້ຮັກສາຮຽນຮູ້ໃນຄຳສອນຂອງພະເຈົ້າ

    ຊ. ສ້າງເຂົາໃຫ້ເປັນສາວົກ

2. ສ້າງເຂົາໃຫ້ເປັນບຸກຄົນທີ່ມີຄວາມມຸ້ງໝັ້ນຕັ້ງໃຈໃນພື້ນຖານ 3 ປະການ

    ກ. ມີຄວາມຕັ້ງໃຈຕໍ່ພະຄຣິດໃນເລື່ອງຄວາມພົ້ນ

    ຂ. ມີຄວາມຕັ້ງໃຈໃນການຈະເລີນເຕີບໃຫຍ່ໃນພະກາຍຂອງພະຄຣິດ

    ຄ. ມີຄວາມຕັ້ງໃຈທີ່ຈະເຊື່ອຟັງ ແລະທຳງານຂອງພະຄຣິດເຈົ້າ

3. ໃນການສ້າງ ແລະຈັດລະບຽບຂອງຜູ້ເຊື່ອໃນຄຣິສຕະຈັກ

    ກ. ເພີ່ມເຕີມຜູ້ເຊື່ອໃໝ່

GCI

ຂ. ສ້າງການນະມັດສະການໃຫ້ມີຄວາມໝາຍ

ຄ. ເອື້ອອໍານວຍຄວາມສະດວກໃນການຕິດຕາມຜົນ

ງ. ຈັດຕຽມໂອກາດໃນການຮັບໃຊ້

ຈ. ຫາໂອກາດໃນການອໍານວຍຄວາມສະດວກຢ່າງເໝາະສົມ

## *ຂ. ສິ່ງຈໍາເປັນທົ່ວໄປ ຂອງນັກບຸກເບີກຄຣິສຕະຈັກ ມີຫລັກການຕາມຫລັກພະຄໍາພີ 5 ປະການ*

ບໍ່ແມ່ນທຸກຄົນທີ່ຈະຮັບການຕຽມ ຫລື ຕັ້ງໃຈໃນການຕັ້ງຄຣິສຕະຈັກ ການທີ່ໃຜຈັກຄົນທີ່ບໍ່ມີຄູນສົມບັດໃນການອອກໄປສ້າງຄຣິສຕະຈັກ ແລະພະຍາຍາມທີ່ຈະອອກໄປເລີ້ມຄຣິສຕະຈັກນັ້ນ ອາດຈະສົ່ງຜົນໃນທາງລົບຫລາຍກວ່າ. ບໍ່ພຽງແຕ່ເປັນການຈັດການທີ່ຜິດພາດໃນຊັບພະຍາກອນເທົ່ານັ້ນ, ແຕ່ມັນກໍເປັນວິທີທາງທີ່ມີປະໂຫຍດທີ່ຈະ (Crush ຊຶມ ກະແທກ ບີບ ກໍາຈັດ) ບາງຄົນ ດ້ວຍການຖ່ວງດຶງ ແລະບໍ່ອະນຸຍາດໃຫ້ມີຄວາມຜິດພາດ, ຄວາມບໍ່ສົມຫວັງ ແລະ ຄວາມຕົກຕໍ່າ. (it is also an effective way to crush someone with the weight of unwarranted guilt, frustration and depression) 1 ໂກຣິນໂທ 9:19-23

*1 ໂກຣິນໂທ 9:19-23*

*19 ເຖິງແມ່ນວ່າເຮົາບໍ່ໄດ້ຢູ່ໃນບັງຄັບຂອງຜູ້ໃດ ເຮົາກໍຍັງຍອມຕົວເປັນຜູ້ຮັບໃຊ້ ຂອງຄົນທັງປວງ ເພື່ອຈະໄດ້ນໍາຄົນຈໍານວນຫລວງຫລາຍມາເປັນສິດ 20 ຕໍ່ຄົນຢິວເຮົາ*
*ໄດ້ເຮັດເຫມືອນຄົນຢິວ ເພື່ອຈະໄດ້ໃຈຄົນຢິວ ຕໍ່ຄົນທີ່ຢູ່ໃຕ້ພະບັນຍັດເຮົາກໍເຮັດໄດ້ໃຈຄົນທັງຫລາຍທີ່ຢູ່ໃຕ້ພະບັນຍັດ (ເຖິງແມ່ນເຮົາເອງບໍ່ຢູ່ໃຕ້ພະບັນຍັດກໍດີ) ເພື່ອຈະໄດ້*
*ໃຈຄົນທັງຫລາຍທີ່ຢູ່ໃຕ້ພະບັນຍັດນັ້ນ 21 ຕໍ່ຄົນທີ່ຢູ່ນອກພະບັນຍັດເຮົາກໍເຮັດເຫມືອນຄົນທີ່ຢູ່ນອກພະບັນຍັດ (ເຖິງແມ່ນເຮົາບໍ່ຢູ່ນອກພະບັນຍັດຂອງພະເຈົ້າກໍດີ ແຕ່ເຮົາຢູ່*
*ໃຕ້ພະບັນຍັດຂອງພະຄຣິດ) ເພື່ອຈະໄດ້ໃຈຄົນທັງຫລາຍທີ່ຢູ່ນອກພະບັນຍັດນັ້ນ 22 ຕໍ່ຄົນທີ່ອ່ອນແອເຮົາກໍເຮັດເຫມືອນຄົນອ່ອນແອ ເພື່ອຈະໄດ້ໃຈຄົນອ່ອນແອ ເຮົາຍອມ*
*ເປັນຄົນທຸກຊະນິດເພາະເຫັນແກ່ຄົນທັງປວງ ເພື່ອເຮົາຈະໄດ້ຊ່ອຍບາງຄົນໃຫ້ພົ້ນດ້ວຍທຸກວິທີທາງ 23 ເຮົາເຮັດຕາມສິ່ງເຫລົ່ານີ້ເພາະເຫັນແກ່ຂ່າວປະເສີດເພື່ອເຮົາຈະໄດ້*
*ມີສ່ວນໃນຂ່າວປະເສີດນັ້ນ*

## ເປົ້າໝາຍ: ເພື່ອໄຊຊະນະໃຫ້ຫລາຍເທົ່າທີ່ຈະເຮັດໄດ້ "ຂໍ້ 19"

## ເຮົາຈະບັນລຸເປົ້າໝາຍໄດ້ຢ່າງໃດ?

1. **ເປັນທາດຮັບໃຊ້** – ເຕັມໃຈທີ່ຈະມອບຖວາຍສິດທິສ່ວນຕົວ

   *ຂໍ້19 "ເພາະເຖິງແມ່ນວ່າຂ້າພະເຈົ້າບໍ່ໄດ້ຢູ່ໃນບັງຄັບຂອງຜູ້ໃດ ຂ້າພະເຈົ້າກໍຍັງຍອມຕົວເປັນທາດຮັບໃຊ້ຄົນທັງປວງ"*

2. **ການສະແດງຕົວ /ວາງຕົວ** – ພະຍາຍາມເປັນນຶ່ງດຽວກັບບຸກຄົນທີ່ທ່ານປາຖະໜາທີ່ຈະນໍາເຂົາ.

   "ຕໍ່ພວກຢິວ ຂໍ້ 20-22
   ຕໍ່ພວກທີ່ຢູ່ພາຍໃຕ້ບັນຍັດ
   ຕໍ່ພວກທີ່ບໍ່ໄດ້ຢູ່ພາຍໃຕ້ພະບັນຍັດ
   ຕໍ່ຄົນທີ່ອ່ອນແອ
   ຂ້າພະເຈົ້າຈະຍອມເປັນຄົນທຸກຊະນິດຕໍ່ຄົນທັງປວງ"

3. **ການວາງຕົວໃນສະພາບແວດລ້ອມ/ ບໍລິບົດ (CONTEXTUALSATION)** – ເຮັດທຸກຢ່າງທີ່ຈໍາເປັນໃນການບັນລຸເຖິງເປົ້າໝາຍ

GCI

ຂໍ້ 22 *ຂ້າພະເຈົ້າຍອມເປັນຄົນທຸກຊະນິດຕໍ່ຄົນທັງປວງເພື່ອຈະຊ່ວຍເຫລືອເຂົາໃຫ້ພົ້ນ*

4. **ແບບແຜນ** – ໃຊ້ທຸກວິຖີທາງທີ່ເປັນໄປໄດ້ໃຫ້ປະສົບຜົນສຳເລັດໃນເປົ້າໝາຍ

ຂໍ້ 22 *"ເພື່ອຈະຊ່ວຍເຂົາໃຫ້ພົ້ນໄດ້ໂດຍທຸກວິຖີທາງ"*

5. **ແຮງຈູງໃຈ** – ມີແຮງຈູງໃຈຢ່າງແທ້ຈິງ

ຂໍ້ 23 ກ *"ຂ້າພະເຈົ້າເຮັດຢ່າງນີ້ເພາະເຫັນແກ່ຂ່າວປະເສີດ"*

## ຄ. *ເປັນການກຳນົດເວລາສະເພາະເຈາະຈົງສຳລັບນັກສ້າງຄຣິສຕະຈັກ : ມີ 11 ປະການທີ່ສຳຄັນ*

ຄຸນສົມບັດ 11 ປະການດັ່ງຕໍ່ໄປນີ້ໄດ້ຄັດເລືອກຈາກຫົວຂໍ້ໃຫຍ່ຂອງຄຸນລັກສະນະ 46 ປະການ ໃນການສຶກສາຂອງ Chartes E FullerInstitule of Evangelism and Church Growth ເມື່ອປີ 1984

ແມ່ນວ່າ ຄຸນສົມບັດທັງຫລາຍນີ້ຈະເປັນສິ່ງທີ່ສຳຄັນ ແຕ່ທັງ 11 ປະການນີ້ກໍໄດ້ຮັບການພິຈາລະນາໃຫ້ໄດ້ຮັບການປັບໃຊ້

ແບບຢ່າງອັນດີຂອງນັກສ້າງຕັ້ງຄຣິສຕະຈັກກໍຄືຜູ້ທີ່:

1. **<u>ອະທິຖານ</u>**ຢ່າງຮ້ອນຮົນ. ລາວເປັນຜູ້ທີ່:

   ກ. ໃຫ້ການອະທິຖານເປັນສິ່ງສູງສຸດສຳລັບຊີວິດ

   ຂ. ອະທິຖານເປັນປະຈຳ ຈັດຕາຕະລາງໃນການອະທິຖານ ແລະອະທິຖານຢ່າງຕໍ່ເນື່ອງ ສະໝໍ່າສະເໝີ ມີເວລາໃນການນະມັດສະການສ່ວນຕົວກັບພະເຈົ້າ

   ຄ. ອະທິຖານເພື່ອຫົວຂໍ້ສະເພາະເຈາະຈົງໃນຊີວິດສ່ວນຕົວ ແລະໃນພັນທະກິດ

2. ຝຶກຫັດ**<u>ຄວາມເຊື່ອ</u>**. ລາວເປັນຜູ້ທີ່:

   ກ. ມີຂະບວນການໃນການຕັດສິນໃຈ ເຊື່ອໝັ້ນໃນການຊົງເອີ້ນໃຫ້ເຮັດພັນທະກິດຕັ້ງຄຣິສຕະຈັກ

   ຂ. ມີຄວາມເຊື່ອໃນການທຳງານຂອງພະເຈົ້າ

   ຄ. ມີຄວາມຈິດຈໍ່ດ້ວຍຄວາມຄາດຫວັງ ແລະມີຄວາມຫວັງໃຈ

   ງ. ພ້ອມທີ່ຈະລໍຄອຍໃນຄຳຕອບໃນຄຳອະທິຖານທີ່ໄດ້ທູນຂໍ

3. ມີ**<u>ນິມິດ</u>**. ລາວເປັນຜູ້ທີ່:

GCI

ກ. ຄິດໂຄງການໄປສູ່ອານາຄົດ ເບິ່ງຂ້າມໃນສະພາວະທີ່ເປັນຢູ່ໃນປັດຈະບັນ

ຂ. ພັດທະນາໃຫ້ມີນິມິດທີ່ເດັ່ນ ມີວິໄສທັດທີ່ມີປັດສະຍາໃນການເຮັດພັນທະກິດ

ຄ. ມີຄວາມພຽນພະຍາຍາມ ໃນການມີວິໄສທັດຕໍ່ຜູ້ຄົນ

ງ. ສະແຫວງຫາໂອກາດທີ່ຈະເຮັດໃນສິ່ງທີ່ທ້າທາຍ ເຊັ່ນ ໂອກາດເຮັດໃນສິ່ງໃຫມ່ໆ ຫາກປະເຊີນອຸປະສັກ

ຈ. ຈັດການຢ່າງມີປະສິດທິພາບກັບອົງປະກອບທີ່ຂາດວິໄສທັດ

ສ. ບໍ່ຈຳກັດຄວາມສາມາດຂອງພະເຈົ້າ, ຕົນເອງ ຫລືຜູ້ອື່ນ

ຊ. ສ້າງຄຣິສຕະຈັກທີ່ມີລັກສະນະສະເພາະຢ່າງຊັດເຈນສອດຄ້ອງຕາມນິມິດ ແລະແນວທາງ

ຍ. ເຊື່ອພະເຈົ້າສຳລັບສິ່ງທີ່ຍິ່ງໃຫຍ່

4. ຖວາຍຕົວໃນການເຮັດໃຫ້ຄຣິສຕະຈັກ**ເຕີບໃຫຍ່**. ລາວເປັນຜູ້ທີ່:

ກ. ເຊື່ອວ່າການຈະເລີນເຕີບໃຫຍ່ຂອງຄຣິສຕະຈັກເປັນຫລັກການທີ່ຖືກຕ້ອງຕາມຫລັກສາດສະ ໜາສາດ

ຂ. ມີຄວາມໜັກແໜ້ນແລະເຕີບໃຫຍ່ຢ່າງໝັ້ນຄົງໂດຍປັດສະຈາກການສະແຫວງຫາ "ຄວາມສຳເລັດໂດຍໄວ"

ຄ. ເປັນຜູ້ມີຄວາມມຸ້ງໝັ້ນຕໍ່ການຈະເລີນເຕີບໃຫຍ່ໃນຈຳນວນ ແລະໃນລະຫວ່າງການຈະເລີນເຕີບໃຫຍ່ທາງຝ່າຍວິນຍານດ້ວຍ

ງ. ຄິດເຖິງອຸປະສັກທີ່ຈະເຮັດໃຫ້ບໍ່ຈະເລີນເຕີບໃຫຍ່ ແລະການຫລົ້ມເຫລວຕໍ່ຕົນເອງ

ຈ. ສ້າງເປົ້າໝາຍໃນດ້ານການເງິນທີ່ຈະສາມາດເປັນຄຣິສຕະຈັກທີ່ລ້ຽງຕົນເອງໄດ້ໃນເວລາທີ່ກຳນົດ

ສ. ບໍ່ຕົກຢູ່ໃນພັນທະກິດການລ້ຽງດູເທົ່ານັ້ນ

ຊ. ເບິ່ງໂຄງການຄຣິສຕະຈັກໃນພາບລວມຂອງອານາຈັກພະເຈົ້າ

ຍ. ຮຽນຮູ້ປະສົບການການສ້າງຄຣິສຕະຈັກດ້ວຍການ "ລົງມືເຮັດ"

GCI

5. **<u>ມີແຮງກະຕຸ້ນ</u>**ຢ່າງແທ້ຈິງ. ລາວເປັນຜູ້ທີ່:

   ກ. ມີຄວາມມຸ້ງເນັ້ນໃນການເປັນເລີດ.

   ຂ. ມີຄວາມມານະອົດທົນຕໍ່ສູ້ບໍ່ຖອຍ.

   ຄ. ມີຊີວິດທີ່ຈະເລີ້ມຕົ້ນແມ່ນເລີ້ມຈາກສິ່ງທີ່ບໍ່ມີອັນໃດເລີຍ.

   ງ. ພ້ອມທີ່ຈະເຮັດວຽກໜັກ ແລະເປັນເວລານານ.

6. ສ້າງ**<u>ຄວາມເປັນເຈົ້າຂອງ</u>**ໃນການເຮັດພັນທະກິດ. ລາວເປັນຜູ້ທີ່:

   ກ. ຮັບຜິດຊອບຊ່ອຍເຫລືອຄົນອື່ນໃຫ້ຈະເລີນເຕີບໃຫຍ່ ແລະປະສົບຄວາມສໍາເລັດໃນງານພັນທະກິດ.

   ຂ. ມີຄວາມມຸ້ງເນັ້ນທີ່ຈະມີໄຊຊະນະເໜືອຜູ້ຄົນຕໍ່ນິມິດທີ່ມີຢູ່.

   ຄ. ສ້າງຄວາມເປັນເອກະລັກຂອງສະມາຊິກຄຣິສຕະຈັກ.

   ງ. ຫລີກລ້ຽງເປົ້າໝາຍທີ່ບໍ່ສາມາດບັນລຸໃນຄວາມເປັນຈິງໄດ້ອອກຈາກສະມາຊິກ.

7. ໃຊ້**<u>ຂອງປະທານ</u>**ຂອງຜູ້ອື່ນໃຫ້ເປັນປະໂຫຍດ. ລາວເປັນຜູ້ທີ່:

   ກ. ໃຫ້ຄົນເຮັດວຽກຕາມໜ້າທີ່ຂອງເຂົາໃນການເຮັດພັນທະກິດ.

   ຂ. ພິຈາລະນາຂອງປະທານຝ່າຍວິນຍານຂອງຜູ້ອື່ນໄດ້.

   ຄ. ຈັດຄົນໃຫ້ເຂົ້າກັບຄວາມຕ້ອງການຂອງງານພັນທະກິດ ແລະຈັດໂອກາດໃຫ້ເຂົາເຫລົ່ານັ້ນຕາມຂອງປະທານທີ່ຖະນັດ.

   ງ. ສາມາດກະຈາຍງານມອບໝາຍງານໃຫ້ແກ່ຜູ້ຄົນໄດ້ຢ່າງມີປະສິດທິພາບ.

   ຈ. ຫລີກລ້ຽງການແຈກຈ່າຍງານພັນທະກິດໃຫ້ຄົນອື່ນຮັບຜິດຊອບໂດຍປັດສະຈາກການຕຽມຢ່າງພໍພຽງ.

   ສ. ບໍ່ຈໍາກັດສິດທິອໍານາດໃນຂອງປະທານຝ່າຍວິນຍານຂອງຜູ້ອື່ນ.

8. ສ້າງ**<u>ຄວາມສໍາພັນ</u>**ຢ່າງມີປະສິດທິພາບ. ລາວເປັນຜູ້ທີ່:

   ກ. ຕອບສະໜອງໃນສິ່ງທີ່ຈໍາເປັນເລັ່ງດ່ວນໃນຄວາມຕ້ອງການ ແລະຫວ່ງໃຍຜູ້ອື່ນ

   ຂ. ສະແດງອອກເຖິງຄວາມຮັກຂອງພະເຈົ້າ ແລະມີຄວາມເມດຕາກະລຸນາຕໍ່ຜູ້ອື່ນ

   ຄ. ຮຽນຮູ້ຈັກຜູ້ອື່ນເປັນການສ່ວນຕົວ

   ງ. ສາມາດເຮັດໃຫ້ຜູ້ອື່ນມີຄວາມຮູ້ສຶກໝັ້ນຄົງ ແລະມີຄວາມຮູ້ສຶກສະບາຍໃນແຕ່ລະຄົນ

GCI

ຈ. ບໍ່ຕັດສິນຫລືລຳອຽງຕໍ່ຄົນໃຫມ່

ສ. ມີຄວາມປະທັບໃຈ ແລະຍອມຮັບໃນສິ່ງເລັກໆນ້ອຍໆ ຂອງຜູ້ຄົນ

ຊ. ໃຊ້ເວລາຢ່າງມີຄຸນນະພາບກັບຊາວບ້ານ

9. **ມີຄວາມຍືດຫຍຸ່ນ** ແລະ **<u>ປັບຕົວໄດ້</u>**. ລາວເປັນຜູ້ທີ່:

ກ. ຈັດການໃນສິ່ງທີ່ບໍ່ຊັດເຈນຫລືຄຸມເຄືອໄດ້ຢ່າງມີປະສິດທິພາບ.

ຂ. ຈັດການກັບການປ່ຽນແປງຢ່າງປັດຈຸບັນທັນດ່ວນ ຫລືມີຄວາມຄິດທີ່ໄດ້ຢ່າງມີປະສິດທິພາບ.

ຄ. ປັບວິທີການດ້ວຍຕົນເອງໃນຄວາມແຕກຕ່າງຂອງໂຄງການໃນການສ້າງຄຣິສຕະຈັກ.

ງ. ຈັດລຳດັບຄວາມສຳຄັນ ແລະເນັ້ນໃນຄວາມສຳຄັນໃນລະຫວ່າງທີ່ຄຣິສຕະຈັກຈະເລີນເຕີບໃຫຍ່ທີ່ຫລາກຫລາຍ.

ຈ. ເຮັດໃນສິ່ງທີ່ຈຳເປັນ ແລະໃນເວລາທີ່ຈຳເປັນ.

10. ມີການປະສານ**<u>ຄວາມຮ່ວມມື</u>**. ລາວເປັນຜູ້ທີ່:

ກ. ມີຄວາມເຫັນພ້ອງທີ່ຊັດເຈນຕໍ່ຜູ້ຮ່ວມງານ ແລະບົດບາດໃນການມີສ່ວນຮ່ວມໃນງານພັນທະ ກິດ.

ຂ. ມີຄວາມຊັດເຈນໃນບົດບາດທີ່ຈະໃຊ້ບ້ານຂອງຕົນເອງເປັນເໝືອນສຳນັກງານ

ຄ. ປະເມີນຜົນຂອງຜົນງານການເຮັດພັນທະກິດຕາມຂໍ້ຮຽກຮ້ອງຂອງເດັກນ້ອຍ

ງ. ທຳງານເປັນທີມກັບຄູ່ສົມລົດ

ຈ. ມີແຜນຍຸດທະສາດໃນການຈັດການກັບຄົນແປກໜ້າ

ສ. ມີຊີວິດຄອບຄົວທີ່ເປັນແບບຢ່າງຕໍ່ຄຣິສຕະຈັກ ແລະຊຸມຊົນ

ຊ. ຄູ່ສົມລົດມີຂໍ້ຕົກລົງ ແລະມີສ່ວນຮ່ວມໃນການເຮັດພັນທະກິດ

ຍ. ມີແຜນການທີ່ຮອບຄອບ ແລະປ້ອງກັນຄວາມເປັນສ່ວນຕົວຂອງຊີວິດຄອບຄົວ

11. ສ້າງ**<u>ກຸ່ມກ້ອນສາມັກຄີ</u>**ໃນຄຣິສຕະຈັກ. ລາວເປັນຜູ້ທີ່:

ກ. ພັດທະນາກຸ່ມຍ່ອຍ (ນິວເຄັຽ) ຫລືກຸ່ມທີ່ເປັນພື້ນຖານ

ຂ. ຮັບລວບລວມຜູ້ມາໃຫມ່ ແລະປະສານຄວາມສຳພັນຫລືນຳມາຮ່ວມກິດຈະກຳຂອງຄຣິສຕະຈັກ

GCI

ຄ. ໃຫ້ຂວັນ ແລະກຳລັງໃຈຕໍ່ຜູ້ຄົນ

ງ. ໃຊ້ກຸ່ມຢ່າງມີປະສິດທິພາບ

# III. ຫລັກການພື້ນຖານໃນການສ້າງຕັ້ງຄຣິສຕະຈັກ

## *A. ກຳນົດພື້ນທີ່ໃນການເກັບກ່ຽວຫລືພື້ນທີ່ທີ່ຈະເກັບກ່ຽວໄດ້ຢ່າງໄວວາ*

ມັດທາຍ 9:37-38
*ແລ້ວພຣະອົງຊົງກ່າວແກ່ພວກສິດຂອງພຣະອົງວ່າ, "ເຂົ້າທີ່ຈະກ່ຽວນັ້ນກໍຫລາຍແທ້ ແຕ່ຄົນງານມີຫນ້ອຍຢູ່ ເພາະສັນນັ້ນ ພວກທ່ານຈົ່ງອ້ອນວອນຜູ້ເປັນເຈົ້າຂອງນາ ໃຫ້ຈຳຄົນງານມາໃນການກ່ຽວຂອງທ່ານເສຍ"*

ກຸນແຈໃນການເລືອກສະຖານທີ່ດີທີ່ສຸດໃນການເລີ້ມຄຣິສຕະຈັກໃຫມ່

1. **ອະທິຖານ** ແລະໄວຕໍ່ການຊົງນຳຂອງພຣະວິນຍານ ກິຈະການ 16:1-15

ກ. ອະທິຖານກ່ອນເລີ້ມຕົ້ນງານ ກິດຈະການ 13:3

*ກິດຈະການ 13:3*
*ເມື່ອຖືສິນອົດອາຫານແລະໄຫວ້ວອນແລ້ວ ກໍໄດ້ວາງມືໃສ່ບາຣ໌ນາບັສແລະໂຊໂລ ຈຶ່ງໃຫ້ເຂົາອອກໄປ.*

ຂ. ຄິດເຖິງການຊົງນຳຂອງພຣະເຈົ້າຜ່ານທາງສະຖານະການຕ່າງໆ ກິຈະການ 13:49-51.

*ກິຈະການ 13:49-51*
*ແລະພຣະທຳຂອງອົງພຣະຜູ້ເປັນເຈົ້າໄດ້ແຜ່ໄປທົ່ວຂອບເຂດນັ້ນ ແຕ່ພວກຢິວໄດ້ຍົວະຍົງພວກຜູ້ຍິງທີ່ມີກຽດຕິຍົດ ຊຶ່ງຢຳເກງພຣະເຈົ້າກັບທັງຜູ້ຊາຍທີ່ເປັນໃຫຍ່ໃນເມືອງນັ້ນ ໄດ້ກໍ່ການຂົ່ມເຫັງໂປໂລ ແລະບາຣະນາບາ ຈຶ່ງຂັບໄລ່ທ່ານທັງສອງອອກຈາກເຂດແດນຂອງເຂົາ ຝ່າຍໂປໂລກັບບາຣະນາບາກໍຕັດສຳພັນ ດ້ວຍສັນຂີ້ຝຸ່ນທີ່ຕິດຕີນອອກ ແລ້ວກໍໄປຍັງເມືອງອີໂກນີອຸມ.*

ຄ. ຮູ້ວ່າ ພຣະເຈົ້າຊົງປິດບາງປະຕູເພື່ອທີ່ຈະເປີດປະຕູອື່ນ ກິຈະການ 16:6

*ກິຈະການ 16:6*
*ເມື່ອພຣະວິນຍານບໍຣິສຸດຊົງຫ້າມບໍ່ໃຫ້ກ່າວພຣະທຳໃນແຂວງອາເຊຍ ທ່ານທັງສອງໄດ້ທຽວໄປທົ່ວເຂດແດນເມືອງຟີເຄຍແລະເມືອງຄາລາເຕຍ.*

GCI

2. **ສຶກສາ**ພື້ນທີ່ທີ່ຢູ່ພາຍໃຕ້ການພິຈາລະນາ

ກ) ກຳນົດແຜນທີ່ ຫລືຮ່າງແຜນທີ່ຫາກເປັນໄດ້.

ຂ) ຢ້ຽມຢາມຜູ້ຄົນທີ່ຢູ່ໃນພື້ນທີ່

(i) ເວົ້າລົມກັບພວກເຂົາ.

(ii) ແຈກໃບປິວ.

(iii) ແນະນຳຕົວເອງວ່າທ່ານເປັນຄູສອນພະຄຳພີ ແລະເປີດໂອກາດໃນການນຳກຸ່ມສຶກສາພະຄຳພີ.

3. ທຳການ**<u>ສຳຫລວດຂໍ້ມູນ</u>**

ກ) ຈົດສະຖານທີ່ຕ່າງໆ ພາຍໃຕ້ການພິຈາລະນາເປັນສະຖານທີ່ທີ່ຍັງບໍ່ມີຄຣິສຕະຈັກ ໃນການປະກາດຂ່າວປະເສີດຂອງພະເຈົ້າ

ຂ) ພົບປະກັບສິດຍາພິບານ ແລະຜູ້ນຳຂອງຄຣິສຕະຈັກຫລືກຸ່ມທີ່ມີແຜນການຈະໃຫ້ການສະໜັບສະໜູນງານໃຫມ່

ຄ) ຂຽນລາຍຊື່ຂອງສະຖານທີ່ໃນແຕ່ລະແຫ່ງວ່າບ່ອນໃດແດ່ທີ່ຍັງບໍ່ມີການເຮັດວຽກ ຫລື ມີສະຖານທີ່ບ່ອນໃດແດ່ທີ່ເຄີຍໄດ້ເຂົ້າໄປຢ້ຽມຢາມເພື່ອທີ່ຈະເປີດງານໃຫມ່ແດ່.

ງ) ຖາມສະມາຊິກຄຣິສຕະຈັກທີ່ຈະໃຫ້ຊື່ ແລະທີ່ຢູ່ຍາດມິດພີ່ນ້ອງຂອງເຂົາທີ່ອາໃສຢູ່ໃນເຂດພື້ນທີ່ນັ້ນ.

ຈ) ພົບສະມາຊິກທີ່ມີຍາດພີ່ນ້ອງຢູ່ໃນພື້ນທີ່ນັ້ນ ໃຫ້ອອກສຳຫລວດຄຣິສຕະຈັກເພື່ອນບ້ານໃນການຫາສະມາຊິກທີ່ມີຍາດພີ່ນ້ອງທີ່ຢູ່ໃນສະຖານທີ່ທີ່ໄດ້ຮັບການພິຈາລະນາເພື່ອເປີດງານໃຫມ່.

ສ) ໃນການພົບປະກັບຜູ້ທີ່ມີຍາດພີ່ນ້ອງທີ່ຢູ່ໃນພື້ນທີ່ເຫລົ່ານັ້ນໃຫ້ຖາມພວກເຂົາເຖິງຄວາມສຳພັນທີ່ດີກັບຍາດພີ່ນ້ອງ ແລະໃນເລື່ອງທັດສະນະຄະຕິຂອງຍາດກ່ຽວ ກັບພະກິດຕິຄຸນ.

ຊ) ວາງແຜນໃນການເປັນພະຍານຫລືຕາຕະລາງເວລາການອົບຮົມສຳລັບສະມາຊິກ ແລະຍາດພີ່ນ້ອງຂອງພວກເຂົາທີ່ຢູ່ໃນພື້ນທີ່ທີ່ຈະສາມາດເລີ້ມງານໃຫມ່ໄດ້.

4. **<u>ຢ້ຽມຢາມ</u>**ສະຖານທີ່ທີ່ຈະເລີ້ມທຳງານ

ກ) ສິດຍາພິບານ, ສະມາຊິກທີ່ມີຍາດຢູ່ໃນພື້ນທີ່ ແລະຜູ້ທີ່ຈະນຳການສຶກສາພະຄຳພີກໍເປັນຜູ້ທີ່ຄວນຈະໄປຢ້ຽມຢາມ.

ຂ) ຢ້ຽມຢາມດ້ວຍການອະທິຖານ, ລະມັດລະວັງ ແລະຮູ້ຈັກກາລະເທສະ

ຄ) ບໍ່ຜູກມັດຕົນເອງ

GCI

5. ປັດໃຈທີ່ສຳຄັນສຳລັບການເລືອກສະຖານທີ່ສະເພາະເຈາະຈົງ ກິດຈະການ 16:9

*ກິດຈະການ 16:9*
*ໃນກາງຄືນໂປໂລໄດ້ເຫັນໃນນິມິດ ມີຊາຍຊາວມາເກໂດເນັຽຄົນນຶ່ງຢືນຢູ່ອ້ອນວອນວ່າ, "ຂໍຂ້າມມາເຖິງເມືອງມາເກໂດເນຍພີ້ ເພື່ອຊ່ອຍພວກຂ້ານ້ອຍແດ່ທ້ອນ"*

ກ) ການຊົງນຳຂອງພະວິນຍານບໍລິສຸດໃນສະຖານທີ່ສະເພາະເຈາະຈົງ
ກິດຈະການ 16:9

ຂ) ເປີດປະຕູ / ໂອກາດ/ ການເຊື້ອເຊີນໄປຍັງສະຖານທີ່ສະເພາະເຈາະຈົງ

ຄ) ໃຊ້ວິທີການທີ່ເໝາະສົມໃນການໃຊ້ເປີດງານໃຫມ່

ງ) ຂໍ້ຈຳກັດທາງດ້ານເສດຖະກິດຂອງຄຣິສຕະຈັກ ຫລືກຸ່ມທີ່ສະໜັບສະໜູນ

ຈ) ໄລຍະທາງຈາກຄຣິສຕະຈັກອື່ນໆ

(i) ເປົ້າໝາຍຂອງຄຣິສຕະຈັກໃນທຸກຊຸມຊົນ

(ii) ມີຄຣິສຕະຈັກຕາມໄລຍະທາງທີ່ແຕ່ລະຄົນສາມາດເດີນໄປໄດ້

(iii) ມີຄຣິສຕະຈັກທຸກກິໂລແມັດຕາມໄລຍະທາງໄປໃນເມືອງ

6. ຕັດສິນໃຈວ່າ**<u>ທີ່ໃດ</u>**ເປັນບ່ອນຄຣິສຕະຈັກຈະເຮັດການປະຊຸມ

ກ) ຫລາຍກຸ່ມເລີ້ມມີການປະຊຸມກັນຕາມບ້ານ.

(i) ຈຳເປັນຕ້ອງພົບປະກັບຜູ້ຄົນໃນສະຖານທີ່ທີ່ພວກເຂົາຢູ່.

(ii) ຜູ້ຄົນຈະມາບ້ານຂອງເພື່ອນທີ່ບໍ່ໄດ້ມາອາຄານຄຣິສຕະຈັກ.

(iii) ມີຄວາມພ້ອມໃນການເຊົ່າຫລືຈ່າຍຄ່າກໍ່ສ້າງ.

(iv) ຈຳເປັນຕ້ອງມີການພົບປະກັນໃນສະຖານທີ່ເດີມເປັນປະຈຳ.

(v) ສະຖານທີ່ກຸ່ມມີການປະຊຸມກັນບໍ່ໄດ້ເປັນປັດໃຈໃນການກຳໜົດການພັດທະນາຂອງກຸ່ມເຂົ້າໄປສູ່ຄຣິສຕະຈັກ.

ຂ) ຖ້າເປັນໄປໄດ້ ສະຖານທີ່ ຄວນຈະເປັນທີ່ໃຈກາງຂອງຊຸມຊົນ.

GCI

## *B. ທ່ານຈຳເປັນຕ້ອງຄົ້ນຫາ ແລະໃຈຈົດຈໍ່ຕໍ່ກຸ່ມທີ່ມີການຕອບສະໜອງ*

1. ບາງກຸ່ມມີການຕອບສະໜອງຫລາຍກວ່າກຸ່ມອື່ນ

   ກ. ຄົນຢິວມີການຕອບສະໜອງຫລາຍກວ່າຄົນຕ່າງຊາດ ມັດທາຍ 10:6, 15:24: ກິດຈະການ 11:19

   ຂ. ຄົນບາຣຽນມີການຕອບສະໜອງຫລາຍກວ່າຊາວເທຊະໂລນິກາ ກິຈການ 17:11

   ຄ. ຄົນທຳມະດາທົ່ວໆໄປມີການຕອບສະໜອງຫລາຍກວ່າຄົນທີ່ມີອຳນາດ ແລະສະຕິປັນຍາ 1 ໂກຣິນໂທ 1: 27

2. ຕົວຢ່າງຂອງກຸ່ມທີ່ມີການຕອບສະໜອງໃນທຸກວັນນີ້

   ກ. ຊົນເຜົ່າຕ່າງໆ

      ຂ. ກຸ່ມທີ່ພັດພາກຈາກຖິ່ນຖານຂອງຕົນເອງ (ເຊັ່ນ ກຸ່ມອົບພະຍົບ, ກຸ່ມຄົນທີ່ມາຕັ້ງຮາກຖານໃຫມ່,ເປັນຕົ້ນ)

      ຄ. ກຸ່ມຄົນບໍ່ຮູ້ໜັງສື ແລະຄົນທີ່ຫັດອ່ານໃຫມ່ໆ.

      ງ. ກຸ່ມທີ່ເລີ້ມຕົ້ນດ້ອຍຄຳຖາມເລື່ອງຄວາມເຊື່ອຕາມປະເພນີ.

      ຈ. ຈົດລາຍຊື່ກຸ່ມທີ່ມີຄວາມຮັບຜິດຊອບໃນພື້ນທີ່ຂອງທ່ານ.

3. ປັດໃຈທີ່ສະແດງໃຫ້ເຫັນເຖິງການຕອບສະໜອງ.

   ກ ມີປະສົບການການຕອບສະໜອງທີ່ດີໃນກຸ່ມປະກາດອື່ນໆ.

   ຂ. ການເຊື້ອເຊີນເຂົ້າເລີ້ມຕົ້ນງານໃຫມ່.

   ຄ. ຢູ່ໃນສະຖານທີ່ມີກຸ່ມຊົນເຜົ່າອາໃສ.

   ງ. ຢູ່ໃນສະຖານທີ່ມີການປັບປ່ຽນໂຍກຍ້າຍ ແລະມີຄວາມໝັ້ນຄົງດ້ານເສດຖະກິດ.

   ຈ. ມີການຕອບສະໜອງໃນດ້ານບວກຕໍ່ການປະກາດໃຫຍ່, ການເປັນພະຍານ, ໃນການສຳຫລວດຕາມບ້ານ.

GCI

## *C. ການຕັ້ງຄຣິສຕະຈັກໄດ້ຜົນດີທີ່ສຸດເທິງດິນທີ່**ອຸດົມສົມບູນ***

1. ປຽບທຽບໃນການຕອບສະໜອງ ໃນຄຳອຸປະມາຂອງພະເຢຊູຄຣິດໃນເລື່ອງຂອງການຫວ່ານພືດເທິງດິນ ມັດທາຍ 13:3-9

2. ສະບັດຂີ້ຝຸ່ນຕີນສຳລັບຜູ້ທີ່ບໍ່ຕ້ອນຮັບທ່ານ - ມັດທາຍ 10:14

3. ຫລີກລ້ຽງສິ່ງທີ່ຈະທຳການປະກາດກັບຄົນທີ່ບໍ່ມັກບໍ່ສົນໃຈ - ມັດທາຍ 7:6

4. ໃຫ້ຄວາມສຳຄັນຕໍ່ພື້ນທີ່ມີຄົນຕອບສະໜອງທີ່ດີເປັນອັນດັບທຳອິດ - ກິດຈະການ 16:9-10

   *ກິດຈະການ 16:9-10*
   *ໃນກາງຄືນໂປໂລໄດ້ເຫັນໃນນິມິດ ມີຊາຍຊາວມາເກໂດເນັຽຄົນນຶ່ງຢືນຢູ່ອ້ອນວອນວ່າ, "ຂໍຂ້າມມາເຖິງເມືອງມາເກໂດເນັຽນີ້ ເພື່ອຊ່ອຍພວກຂ້ານ້ອຍແດ່ທ້ອນ" ເມື່ອທ່ານໄດ້ເຫັນນິມິດດັ່ງນັ້ນແລ້ວ ພວກເຮົາຈຶ່ງພຍາຍາມທັນທີທີ່ຈະອອກໄປເຖິງເມືອງມາເກໂດເນັຽ ດ້ວຍເຫັນແນ່ວ່າພະເຈົ້າໄດ້ຊົງເອີ້ນພວກເຮົາໃຫ້ໄປປະກາດຂ່າວປະເສີດແກ່ຊາວເມືອງນັ້ນ.*

## *D. ການຕັ້ງຄຣິສຕະຈັກເຮັດໄດ້ດີທີ່ສຸດກັບ**ຜູ້ໃຫຍ່** ກ່ອນ*

1. ຜູ້ໃຫຍ່ມີອິດທິພົນຕໍ່ເດັກນ້ອຍຫລາຍກວ່າ ເດັກນ້ອຍທີ່ມີອິດທິພົນຕໍ່ຜູ້ໃຫຍ່.

   ກ. ຖ້າເຮົາຊະນະຜູ້ໃຫຍ່ ແນ່ນອນເຮົາກໍຈະມີໄຊທັງຄອບຄົວ.

   ຂ. ເດັກນ້ອຍພົບວ່າເປັນການຍາກທີ່ຈະດຳເນີນຕໍ່ໄປເມື່ອຖືກຜູ້ປົກຄອງຕໍ່ຕ້ານ.

2. ຜູ້ໃຫຍ່ສາມາດເຂົ້າໃຈ, ຕ້ອນຮັບພະຄຣິດ ແລະຮັບບັບຕິດສະມາໄດ້.

3. ຜູ້ໃຫຍ່ສາມາດໃຫ້ການສະໜັບສະໜູນດ້ານການເງິນໃນການເຮັດງານໄດ້.

## *E. ຢ່າຫລີກລ້ຽງ ແລະພົວພັນໃນກິດຈະກຳທີ່ບໍ່ເກີດຜົນ*

1. ວາງແຜນ ແລະໂຄງການທີ່ໄດ້ທຳງານໃນພື້ນທີ່ທີ່ອາດຈະບໍ່ເອື້ອອຳນວຍສຳລັບທ່ານ.

2. ສ້າງອາຄານທີ່ບໍ່ຈຳເປັນຕໍ່ການສ້າງອານາຈັກຂອງພະເຈົ້າ.

3. ຫລີກລ້ຽງການປະທະທາງດ້ານສາດສະໜາ.

GCI

## *F. ຈັດລະບຽບການເຂົ້າເຖິງຜູ້ຄົນ*

ຫລັງຈາກຊ່ວງເວລາແຫ່ງການທົດສອບລອງນັ້ງ ແລະວາງຂັ້ນຕອນ ແຜນການອາດຈະເປັນການທົດລອງໃນຂັ້ນທຳອິດ.

1. ໃນສະຖານທີ່ທີ່ທ່ານຕ້ອງການໄປ
2. ທ່ານວາງແຜນການຈະໄປບ່ອນນັ້ນຢ່າງໃດ
3. ແຜນການອັນໃດທີ່ທ່ານຈະເຮັດໃຫ້ສຳເລັດ

## *G. ຮັກສາສິ່ງຕ່າງໆ ໃຫ້ຮຽບງ່າຍ 1 ໂກຣິນໂທ 2:1-2*

*1 ໂກຣິນໂທ 2:1-2*
*ພີ່ນ້ອງທັງຫລາຍເອີຍ, ເມື່ອເຮົາໄດ້ມາຫາເຈົ້າທັງຫລາຍ ເຮົາບໍ່ໄດ້ມາເພື່ອປະກາດຄຳພຍານເຣື່ອງ ພະເຈົ້າແກ່ພວກເຈົ້າ ດ້ວຍຖ້ອຍຄຳອັນຫນ້າຟັງ ຫລືດ້ວຍສະຕິປັນຍາ.*

1. Complicated plans will entangle and frustrate.
2. Don't be afraid to lay aside plans and programs (even people at times) that are not productive.
3. Attempting to resurrect a plan that has died.
4. Don't be locked in to "sacred" methods and traditions that no longer work. Be flexible.

## *H. Don't make too much noise if you are in restrictive areas or countries*

1. Do not attack established religious groups (New Addition)

   The established religions are too entrenched in society, government, and the minds of the people to start attacking and blowing a trumpet when someone comes to the Lord.

2. Governments that have Religious Restrictions (New Addition)

   A low profile must be maintained. Other restricted Asian countries fall into this category.

I. *ເລືອກຜູ້ທີ່ໄດ້ຮັບ**ການຊົງເອີ້ນ,** ໄດ້ຮັບຂອງປະທານ ແລະເປັນ**ຄົນຖ່ອມໃຈ**ໃນການເຮັດວຽກຮ່ວມກັບທ່ານ*

1. ການເລືອກສັນຄົນທີ່ຈະຮັບໃຊ້ຮ່ວມກັບທ່ານເປັນວິຖີທາງທີ່ຈະໃຫ້ສາມາດປະສົບຄວາມສຳເລັດຫລື ຫລົ້ມເຫລວ.

2. ໃຫ້ຄວາມສົນໃຈໃນຂອງປະທານແຕ່ລະຄົນຢ່າງລະມັດລະວັງ ແນະນຳແນວທາງໃນການໃຊ້ຂອງປະ ທານຂອງເຂົາມາໃຊ້ໃນພັນທະກິດ.

3. ລະມັດລະວັງຄອຍເຝົ້າເບິ່ງຕົວເອງ ແລະຜູ້ຮ່ວມງານຂອງທ່ານໃນການທຳງານໃຫຍ່.

J. *ໃຊ້**ຊັບພະຍາກອນ**ຂອງທ່ານຢ່າງຊານສະຫລາດ*

1. ອາຄານເປັນສິ່ງທີ່ຕ້ອງຈ່າຍລາຄາແພງ ແລະຕ້ອງບຳລຸງຮັກສາ.

2. ລະມັດລະວັງວ່າທ່ານຈະບໍ່ແຕ່ງເຕີມຕົນເອງດ້ວຍເງິນຂອງພະເຈົ້າ ຍຶດໝັ້ນໃນການຊີ້ແຈງລາຍການຕົວຢ່າງຊື່ສັດ ແລະດ້ວຍວິທີການທີ່ແທ້ຈິງ.

## IV. ວິທີການເພີ້ມພູນຄຣິສຕະຈັກໃນປະຈຸບັນ

ກ. *ການບຸກເບີກ**ຄຣິສຕະຈັກແມ່ - ຄຣິສຕະຈັກລູກ***

ວິທີນີ້ເປັນການແບ່ງສະມາຊິກໃນສ່ວນນຶ່ງຂອງຄຣິສຕະຈັກແລ້ວສົ່ງເຂົາອອກໄປເປັນສ່ວນນຶ່ງຂອງເມືອງ ຫລື ອີກສະຖານທີ່ອີກແຫ່ງນຶ່ງ ໃຫ້ເຂົາເປັນຄຣິສຕະຈັກສາຂາໃຫມ່ ຫລືຄຣິສຕະຈັກໃຫມ່ທີ່ຕັ້ງຂຶ້ນ.

ຕີໂມທີ ສະຕາຣ (TimothyStarr) ໄດ້ສະເໜີວ່າ ແຜນຍຸດທະສາດທີ່ປັດສະຈາກຄຳຖາມເປັນວິທີການທີ່ດີທີ່ສຸດເຊັ່ນດັ່ງແມ່ທີ່ໃຫ້ກຳເນີດບຸດ ດັ່ງນັ້ນຄຣິສຕະຈັກກໍໃຫ້ກຳເນີດຄຣິສຕະຈັກໃຫມ່ ນີ້ເປັນວິທີການທີ່ດີທີ່ສຸດເພາະວ່າເປັນການສະໜັບສະໜູນ ແລະປະສົບການຂອງຄຣິສຕະຈັກທີ່ເຂັ້ມແຂງກວ່າທີ່ຈະເອື້ອຕໍ່ງານໃຫມ່.

ການໃຊ້ວິທີການນີ້ຄຣິສຕະຈັກແມ່ຈະມອບໝາຍໃຫ້ສອງສາມຄອບຄົວໃຫ້ດຳເນີນການຄຣິສຕະຈັກໃຫມ່ທີ່ຢູ່ຫ່າງໄປສອງສາມກິໂລແມັດ ຈາກການທຳງານຂອງຄຣິສຕະຈັກ ແລະການພົບກຸ່ມຄົນໃນພື້ນທີ່ທີ່ມີ ຄວາມຕ້ອງການ.

ຂ. *ວິທີການກຸ່ມ**ສຶກສາພະຄຳພີ***

ນັກບຸກເບີກຄຣິສຕະຈັກໄປຍັງພື້ນທີ່ ແລະເລີ່ມຕົ້ນສຶກສາພະຄຳພີຕາມບ້ານ ຫລືສະຖານທີ່ທີ່ເປັນກາງເປົ້າໝາຍ ໄລຍະໄກຂອງເຂົາກໍຄືການສ້າງຄຣິສຕະຈັກ ແຕ່ເປົ້າໝາຍໃນປະຈຸບັນຂອງເຂົາ ກໍຄືການນຳຄົນ ແຕ່ລະຄົນ ມາຮ່ວມກັນ ນຳພວກເຂົາໃຫ້ເຖິງຄວາມພົ້ນໃນພະເຈົ້າ ແລະລ້ຽງດູພວກເຂົາດ້ວຍພະຄຳຂອງພະເຈົ້າຫົວ ໃຈສຳຄັນກໍຄືການສຶກສາພະຄຳພີເປັນພຽງເຄິ່ງທາງຂອງຄຣິສຕະຈັກ ເມື່ອການສຶກສາພະຄຳພີຂະຫຍາຍໃຫຍ່ ພໍ ກໍຈະນຳພວກເຂົາມາຍັງຄຣິສຕະຈັກ.

GCI

## *ຄ. ວິທີການເພີ້ມພູນກຸ່ມເຊລ*

ການຕັ້ງກຸ່ມເຊລເພື່ອການປະກາດ ແລະສ້າງສາວົກຈົນກະທັ້ງຄຣິສຕະຈັກຂະຫຍາຍຈໍານວນເພີ້ມຫລາຍຂຶ້ນ ເມື່ອນັ້ນຄຣິສຕະຈັກກໍຈະສາມາດຖືກສ້າງຂຶ້ນທ່າມກາງຄຣິສຕຽນທີ່ຈະເລີນເຕີບໃຫຍ່.

## *ງ. ຜ່ານການລວມຕົວກັນໃນ**ທ້ອງຖິ່ນ***

ນີ້ເປັນອີກປະການນຶ່ງທີ່ຮູ້ກັນດີວ່າເປັນວິທີການສໍາລັບຜູ້ຮ່ວມພັນທະກິດ ຊຶ່ງເປັນການຊ່ວຍເຫລືອຂອງຄຣິສຕະຈັກຕ່າງໆ ເຮັດວຽກຮ່ວມກັນເພື່ອສ້າງຄຣິສຕະຈັກໃຫມ່.

## *ຈ. ນັກ**ບຸກເບີກ** ຜູ້ສ້າງຕັ້ງຄຣິສຕະຈັກ*

ຜູ້ບຸກເບີກຄຣິສຕະຈັກເລີ້ມແລກພື້ນທີ່ເພື່ອຈຸດປະສົງໃນການຕັ້ງຄຣິສຕະຈັກ ນີ້ເປັນວິທີທີ່ຖືກໃຊ້ໂດຍຄົນໜຸ່ມ ສາວຈໍານວນຫລວງຫລາຍທີ່ມີຄວາມຮູ້ສຶກມີພາລະໃຈຕ້ອງການ ແລະພັດທະນາໃນສະຖານທີ່ທີ່ສະເພາະ ຫລື ພວກເຂົາສັງເກດເຫັນວ່າໃນພື້ນທີ່ນັ້ນບໍ່ມີນັກປະກາດຫລາຍ ດັ່ງນັ້ນນັກບຸກເບີກຄຣິສຕະຈັກເລີ້ມແລກປຽບເໝືອນຜູ້ທີ່ປ່ຽນແປງ, ເປັນ “ຕົວແທນໃນການປ່ຽນແປງ” ຜູ້ທີ່ເຮັດຫລາຍໆສິ່ງໃຫ້ເກີດຂຶ້ນ.

ເມື່ອວິທີການບຸກເບີກທໍາອິດໄດ້ຖືກໃຊ້ ກຸ່ມຄະນະກໍາມະການມິດຊັ່ນ ຄະນະນິກາຍ ຫລືຄຣິສຕະຈັກ ອາດຈະໃຫ້ການສະໜັບສະໜູນເຕັມທີ່ ຫລືສະໜັບສະໜູນບາງສ່ວນໃນການເລີ້ມງານຄຣິສຕະຈັກໃຫມ່ ຖ້າ ຫາກບໍ່ມີຄຣິສຕະຈັກ ຄະນະນິກາຍທີ່ຢູ່ໃກ້ໆບໍລິເວນຄອຍໃຫ້ຄວາມຊ່ວຍເຫລືອ.

## *ສ. ຈຸດທີ່ຢູ່ຫ່າງໄກຈາກຄໍາເທດສະໜາ*

ການຕັ້ງຄຣິສຕະຈັກອາດຈະເປີດຈຸດເທດສະໜາທີ່ຢູ່ຫ່າງໄກໃນຫລາຍໆຈຸດໄດ້ ເຊັ່ນໃນຮ້ານອາຫານ ໂຮງແຮມ, ຫໍປະຊຸມ ສາລາກາງ, ເປັນຕົ້ນ ຄົນທີ່ກັບໃຈ ແລະໄດ້ຮັບການລ້ຽງດູຢູ່ສະເໝີກໍຈະກາຍເປັນກຸ່ມນະມັດສະການ ທີ່ເຂັ້ມແຂງໄດ້.

## *ຊ. ກຸ່ມນະມັດສະການທີ່ສອງທີ່ຢູ່ໃນອາຄານຄຣິສຕະຈັກດຽວກັນ*

ບາງຄຣິສຕະຈັກເລີ້ມກຸ່ມນະມັດສະການໂດຍໃຊ້ພາສາທີ່ສອງ, ສາມ ຫລືສີ່ໃນຄຣິສຕະຈັກຂອງຕົນເອງ.

## *ຍ. ກຸ່ມນະມັດສະການແບບທາງໄກຜ່ານດາວທຽມ.*

ຮູບແບບນີ້ໄດ້ຮັບການບຸກເບີກຂຶ້ນໃນຫລາຍໆສະຖານທີ່ເຊັ່ນເກົາຫລີ, ຊີລີ, ແລະມາເລເຊັຽ ເປັນການສ້າງ ຄຣິສຕະຈັກເຖິງອິດສະລະຜ່ານທາງດາວທຽມຊຶ່ງສາມາດຮັກສາສະມາຊິກທັງສອງຝ່າຍໄດ້ - ຄືທັງໃນ ຄຣິສຕະຈັກທີ່ເປັນສູນກາງ ແລະກຸ່ມນະມັດສະການຜ່ານທາງດາວທຽມ ປົກກະຕິແລ້ວຈະມີການປະຊຸມກັນ ໃນບ້ານທີ່ໃຊ້ເປັນຄຣິສຕະຈັກທີ່ມີການແຜ່ພາບດາວທຽມເດືອນລະສອງອາທິດ ແລະອີກສອງອາທິດກໍຈະໄປ ນະມັດສະການໃນຄຣິສຕະຈັກທີ່ເປັນສູນກາງ.

GCI

# V. ປະເຊີນກັບບັນຫາ ແລະສະພາວະຄວາມກົດດັນ

## *ກ. ຄວາມກົດດັນທາງດ້ານຝ່າຍຈິດວິນຍານໃນການບຸກເບີກຄຣິສຕະຈັກ.*

### 1. ຄວາມກົດດັນໃນການເປີດປະຕູ

**2 ໂກຣິນໂທ 2:12-13, 1 ໂກຣິນໂທ 16:9**

ອາຈານໂປໂລໄດ້ກ່າວເຖິງກ່ຽວກັບການບໍ່ໄດ້ພັກຜ່ອນທາງດ້ານຈິດວິນຍານຫລືສັນຕິສຸກໃນຈິດໃຈກ່ຽວກັບການຂັດຂວາງທີ່ທ່ານໄດ້ປະສົບເຖິງແມ່ນຈະມີຊ່ອງທາງຫລາຍໆຊ່ອງທາງ ຊ່ອງທາງທີ່ເໝາະແຕ່ ຖະໜົນປິດ ກໍສ້າງຄວາມກົດດັນຫລາຍ.

*1 ໂກຣິນໂທ 16:9*
*ເພາະວ່າທີ່ນີ້ມີປະຕູໄຂໃຫ້ເຮົາຢ່າງກວ້າງຂວາງຫນ້າຈະເກີດຜົນ ທັງຄົນຂັດຂວາງກໍມີຈຳນວນຫລວງຫລາຍດ້ວຍ.*

### 2. ຄວາມກົດດັນໃນພາຊະນະດິນ (ຮ່າງກາຍຂອງຕົນເອງ) 2 ໂກຣິນໂທ 4:7-10, 7:3-6

ມີຫລາຍສິ່ງຫລາຍຢ່າງທີ່ເຮັດໃຫ້ການທຳງານພັນທະກິດມີຂໍ້ຈຳກັດເພາະຄວາມອ່ອນແອຂອງເຮົາ ຄຳຕອບກໍຄືຄວາມພໍພຽງຂອງເຮົາ.

*2 ໂກຣິນໂທ 4:7-10*
*ແຕ່ວ່າຂອງມີຄ່ານີ້ເຮົາມີໃນພາຊນະດິນ ເພື່ອໃຫ້ເຫັນວ່າຣິດເດດອັນເລີດປະເສີດນັ້ນຈະເປັນຂອງພະເຈົ້າ ບໍ່ໃຊ່ເປັນຂອງເຮົາເອງເຮົາຖືກຄວາມທຸກລຳບາກອ້ອມຂ້າງ ແຕ່ບໍ່ເຖິງອັດຄັດ ເຮົາຈົນປັນຍາ ແຕ່ຍັງບໍ່ຫມົດຫົນທາງອອກ ເຮົາຖືກສັດຕຣູໄລ່ ແຕ່ກໍບໍ່ເຖິງຕົກໃນເງື້ອມມືເຂົາ ເຮົາຖືກຕີລົ້ມແລ້ວ ແຕ່ວ່າບໍ່ເຖິງຕາຍ ຕົວຂອງເຮົາຍອມຢູ່ໃກ້ກັບຄວາມຕາຍເຫມືອນຢ່າງພະເຢຊູຢູ່ສເມີ ເພື່ອຊີວິດຂອງພະເຢຊູຈະໄດ້ປາກົດໃນຕົວເຮົາດ້ວຍ.*

*2 ໂກຣິນໂທ 7:3-6*
*ເຮົາກ່າວຢ່າງນີ້ກໍບໍ່ແມ່ນເພື່ອຈະໃສ່ໂທດພວກເຈົ້າ ເພາະເຮົາໄດ້ບອກແລ້ວວ່າ ເຈົ້າທັງຫລາຍຢູ່ໃນໃຈຂອງເຮົາ ຄືຈະຕາຍຫລືຈະເປັນກໍຢູ່ດ້ວຍກັນ ເຮົາມີຄວາມໄວ້ໃຈແລະພາກພູມໃຈໃນພວກເຈົ້າຢ່າງຫລວງຫລາຍ ເຮົາໄດ້ຮັບຄວາມຊູໃຈຢ່າງບໍຣິບູນ ແລະໃນຄວາມທຸກລຳບາກຂອງເຮົາທຸກຢ່າງ ເຮົາກໍຍັງມີຄວາມຊົມຊື່ນຍິນດີຢ່າງລົ້ນເຫລືອ ເພາະເຖິງແມ່ນວ່າເຮົາໄດ້ມາເຖິງແຂວງມາເກໂດເນັຽແລ້ວ ຮ່າງກາຍຂອງເຮົາກໍບໍ່ໄດ້ພັກຜ່ອນຈັກຍາມ ແຕ່ເຮົາມີຄວາມທຸກລຳບາກຢູ່ອ້ອມຂ້າງ ພາຍນອກມີການຕໍ່ສູ້ ພາຍໃນກໍມີຄວາມຢ້ານ ແຕ່ເຖິງປານນັ້ນ ພະເຈົ້າຜູ້ຊົງໂຜດຫນູນໃຈຄົນທີ່ທໍ້ຖອຍ ໄດ້ຊົງໂຜດຫນູນໃຈເຮົາດ້ວຍການທີ່ຕີໂຕໄດ້ມາເຖິງນັ້ນ.*

### 3. ຄວາມກົດດັນໃນການດູແລລ້ຽງດູປະຈຳວັນ 2 ໂກຣິນໂທ 11:27-29, ໂກໂລຊາຍ 2:1-2

ຄວາມກົດດັນເຫລົ່ານີ້ເກີດຂຶ້ນຈາກຄວາມຫວ່ງໃຍໃນຄວາມຮັບຜິດຊອບຕໍ່ຄຣິສຕະຈັກ.

GCI

**4. ຄວາມກົດດັນເມື່ອເຫັນຄົນປະຖິ້ມ ແລະການຫລອກລວງ. ຄາລາເຕຍ 1:6, 2:13**

ການສູນເສັຽກຳລັງໃຈນຳໄປສູ່ຄວາມທໍ້ແທ້ໃຈເມື່ອເຫັນຄົນໄດ້ປະຖິ້ມພະເຈົ້າ ຫລືຕໍ່ຕ້ານ ຫລື ຂັດຂວາງທ່ານ.

**5. ຄວາມກົດດັນຂອງການຫລັບໄຫລ. 1 ເທຊະໂລນິກ 3:10, 2 ຕີໂມທຽວ 4:5**

ອາຈານໂປໂລໄດ້ເວົ້າກ່ຽວກັບການອະທິຖານທັງກາງເວັນກາງຄືນເພື່ອສິ່ງຄາມຝ່າຍຈິດວິນຍານຂອງພວກເຂົາ ແລະໜູນໃຈຕີໂມທຽວອົດທົນຕໍ່ຄວາມຍາກລຳບາກ.

**6. ຄວາມກົດດັນໃນເລື່ອງສົງຄາມການຕໍ່ສູ້ໃນການປະກາດ. ເອເຟໂຊ 6:12, 2ຕີໂມທຽວ 4:5**

ງານໃນການປະກາດເປັນງານທີ່ຍາກ ແລະຕ້ອງການຄວາມອົດທົນຢ່າງສູງ ເປັນສິ່ງທີ່ຈະຕ້ອງຕໍ່ສູ້ກັບອຳນາດແຫ່ງຄວາມມືດ.

## *ຂ. ຄວາມກົດດັນໃນການບຸກເບີກຄຣິສຕະຈັກ*

**1. ຄວາມກົດດັນໃນການດຳເນີນການດູແລ**

ຄວາມຫວ່ງໃຍເອົາໃຈໃສ່ຕໍ່ຜູ້ຄົນໃນການເກັບຄວາມລັບ ແລະປົກປ້ອງຈັດການໃນການປະເຊີນໜ້າຄວາມກົດດັນໃນການທຳງານ.

**2. ຄວາມກົດດັນຂອງອາລົມໃນການເຮັດພັນທະກິດ**

ຈະຕ້ອງເອົາໃຈໃສ່ຕໍ່ຄວາມຮູ້ສຶກອາລົມຂອງຄົນຍາກຈົນ, ຄົນສິ້ນຫວັງ, ເຈັບປວດ, ປ່ວຍ ແລະຄວາມຕາຍທີ່ສ້າງຄວາມກົດດັນຢ່າງສູງ.

**3. ຄວາມກົດດັນຈາກຄວາມຮູ້ສຶກອ່ອນໄຫວຂອງສະມາຊິກ**

ການທຳງານລ່ວງເວລາເພື່ອຄວາມສາມັກຄີ, ເປັນອັນນຶ່ງອັນດຽວກັນ ແລະຄວາມພໍໃຈໃນພະກາຍໂດຍປັດສະຈາກຄຳຊົມເຊີຍເປັນສິ່ງທີ່ເຮັດໃຫ້ທໍ້ໃຈ.

**4. ຄວາມກົດດັນຈາກການທຳງານໃນຕອນຄໍ່າ ແລະໃນວັນຫຍຸດ**

ມີຄວາມພ້ອມໃນການທຳງານເມື່ອຖືກເອີ້ນໃນການເຮັດວຽກຕອນຄໍ່າ, ວັນເສົາອາທິດ ສ້າງຄວາມກົດ ດັນໃຫ້ກັບຄອບຄົວ.

**5. ຄວາມກົດດັນຈາກຄວາມບໍ່ໝັ້ນຄົງດ້ານສັງຄົມ**
ການທຳງານ ແລະການດຳເນີນຊີວິດມັກຈະເຮັດກັບເພື່ອນບໍ່ເທົ່າໃດຄົນ ແຕ່ບົດບາດຂອງຄອບຄົວສິດຍາພິບານໃນດານການອິເລາະ ແລະເປັນທີ່ປຶກສາກໍຈະເປັນສິ່ງທີ່ເຮັດໃຫ້ເກີດຄວາມກົດດັນເປັນພິເສດ.

GCI

**6. ຄວາມກົດດັນຂອງການທີ່ຕ້ອງມີຈິດວິນຍານທີ່ດີເໝາະສົມ**

ຄວາມຄາດຫວັງຂອງຜູ້ຄົນວ່າຈະຕ້ອງເປັນຄົນທີ່ມີຈິດວິນຍານທີ່ເຂັ້ມແຂງ ເພາະວ່າທ່ານເປັນສິດຍາພິບານ.

**7. ຄວາມກົດດັນຈາກການຄາດຫວັງຂອງຄະນະນິກາຍ**

ການທີ່ຕ້ອງຕອບຄຳຖາມໃນຄວາມກ້າວໜ້າຂອງງານ ແລະລາຍງານຕໍ່ກຸ່ມສະມາຊິກທີ່ປະຊຸມກໍຈະເປັນຄວາມຫຍຸ້ງຍາກແດ່.

**8. ຄວາມກົດດັນຈາກການຖືກແຍກອອກ ຫລືການແຍກຕົວອອກໄປ**

ຄຣິສຕະຈັກຄູ່ຮ່ວມພັນທະກິດຈະມີຄວາມຮູ້ສຶກໂດດດ່ຽວ ແລະຫ່າງວແຫ້ງຫລາຍຈາກກຸ່ມນະມັດສະການ ແລະຄວາມເຂົ້າໃຈຜິດຂອງສິດຍາພິບານຄົນອື່ນໆ.

# VI. ຫລັກການໃນການສະໜັບສະໜູນໃຫ້ຄຣິສຕະຈັກຈະເລີນເຕີບໃຫຍ່

## *ກ. ການເຕີບໃຫຍ່ດ້ານຈິດວິນຍານ*

1. <u>**ເຊື່ອຟັງ**</u>ແຜນການຂອງພະເຈົ້າ

ຮູບແບບຂອງຄຣິສຕະຈັກໃນດ້ານພະຄຳພີເປັນການລ້ຽງດູຕົນເອງ (ໂດຍການຖວາຍສິບລົດ ແລະການຖວາຍຊັບ), ການປົກຄອງຕົນເອງ, ແລະການປະກາດດ້ວຍຕົນເອງ.

2. ຮູ້ສຶກເຖິງ<u>**ຄວາມຮັບຜິດຊອບ**</u>

ຄວາມຮັບຜິດຊອບໃນການລ້ຽງດູ, ການປົກຄອງ ແລະຍື່ນມືຊ່ວຍເຫລືອຄຣິສຕຽນການເຕີບໃຫຍ່ຂອງຄຣິສຕຽນ ແຜນໃນການຖວາຍສິບລົດຈະຊ່ວຍກະຈາຍຄວາມຮັບຜິດຊອບໃນດ້ານການເງິນຢ່າງຍຸດຕິ ທຳ.

3. ມີສຳພັນສະພາບກັບ<u>**ສິດຍາພິບານ**</u>

ການລ້ຽງດູສິດຍາພິບານຈາກກຸ່ມສະມາຊິກທີ່ປະຊຸມຈະ ສ້າງຄວາມຮູ້ ສຶກຮັບຜິດຊອບຂອງແຕ່ລະຄົນໃຫ້ເຂັ້ມແຂງ ເມື່ອພວກເຂົາເຕີບໃຫຍ່ຂຶ້ນແມ່ນຄົນທີ່ຍາກຈົນທີ່ສຸດກໍສາ ມາດລ້ຽງດູສິດຍາພິບານຕາມມາດຕະຖານການດຳເນີນຊີວິດຂອງຕົນເອງໄດ້ ຖ້າມີຄອບຄົວຈັກສິບ ຄອບຄົວ ຫລື ຫລາຍກວ່າສັດຊື່ໃນການຖວາຍ ສິບລົດກໍຈະສາມາດລ້ຽງດູໄດ້.

GCI

4. **<u>ເຊື່ອ</u>** ແລະເສັຽສະຫລະ

ການຕໍ່ສູ້ຕາມຫລັກການຂອງຄົນພື້ນເມືອງຈະຊ່ວຍທັງຜູ້ນຳ ແລະຄຣິສຕະຈັກໃນການພັດທະນາດ້ານຄວາມເຊື່ອ ແລະເສັຽສະລະຊຶ່ງນຳໄປເຖິງພັນທະກິດເຂັ້ມແຂງຂຶ້ນ.

5. ຮຽນຮູ້ໂດຍການລົງມືເຮັດ

ຜູ້ຄົນເຕີບໃຫຍ່ເມື່ອພວກເຂົາຮຽນຮູ້ພະຄຳຂອງພະເຈົ້າ ແລະສອນແກ່ຄົນອື່ນ ພະເຈົ້າຊົງຊ່ວຍພວກເຂົາໃຫ້ພັດທະນາການເປັນຜູ້ນຳ ຂອງປະທານ ແລະພັນທະກິດ.

## *ຂ. ການເຕີບໃຫຍ່ໃນທາງຈຳນວນ*

1. ການດູແລກຸ່ມ**<u>ນ້ອຍ</u>**ຕ່າງໆ

ຄາລະວາດທີ່ເປັນຜູ້ນຳໃນກຸ່ມນ້ອຍໆ ສາມາດເຮັດໜ້າທີ່ອະພິບານສິດແກ່ກຸ່ມນ້ອຍໆ ແລະຊ່ວຍພວກເຂົາໃຫ້ເຕີບໃຫຍ່ໃນທາງຈຳນວນໄດ້ເຊັ່ນດຽວກັບທາງດ້ານຈິດວິນຍານ.

2. ການຍອມຮັບ**<u>ວັດທະນາທຳ</u>**

ຫລັກການທີ່ເປັນຂອງດັ້ງເດີມເຮັດໃຫ້ຄຣິສຕະຈັກສາມາດເປັນທີ່ຍອມຮັບຂອງຊຸມຊົນໃນທາງວັດທະນາທຳຫລາຍຂຶ້ນ ພວກເຂົາບໍ່ໄດ້ເບິ່ງຄຣິສຕະຈັກເປັນອົງກອນຕ່າງຊາດ ຫລືເປັນຕົວແທນທີ່ໄດ້ຮັບຄ່າຈ້າງຈາກກຳລັງຂອງຕ່າງຊາດ ວັດທະນາທຳ ກໍເປັນອຸປະສັກຕໍ່ການຍອມຮັບພະກິດຕິຄຸນກໍຈະໄດ້ຮັບການປົດປ່ອຍອອກໄປ.

3. **<u>ການເປັນພະຍານ</u>**ໂດຍທຳມະຊາດ

ດ້ວຍການເຕີບໃຫຍ່ດ້ານຈິດວິນຍານ ແລະຄວາມຮູ້ສຶກຮັບຜິດຊອບຄຣິສຕຽນເປັນພະຍານ ແລະໄດ້ນຳຫລາຍໆຄອບຄົວ, ໝູ່ເພື່ອນ, ແລະເພື່ອນບ້ານມາເຖິງພະຄຣິດໄດ້.

## *ຄ. ການເຕີບໃຫຍ່ທາງດ້ານພູມສາດ*

1. **<u>ພັນທະກິດ</u>**: ການບຸກເບີກຄຣິສຕະຈັກ

ເມື່ອຄຣິສຕະຈັກທ້ອງຖິ່ນໄດ້ເລັງເຫັນພັນທະກິດໃນການບຸກເບີກຄຣິສຕະຈັກ ການຍື່ນມືໄປຍັງໃນປະ ເທດ ແລະຕ່າງປະເທດກໍຈະເປັນເຫດໃຫ້ຄຣິສຕະຈັກຈະເລີນເຕີບໃຫຍ່ທາງດ້ານພູມສາດ ເຊັ່ນດຽວກັບການເຕີບໃຫຍ່ ທາງດ້ານຈຳນວນ.

2. ການຂະຫຍາຍ**<u>ໂດຍບໍ່ຈຳກັດ</u>**

ຄຣິສຕະຈັກໃຫມ່ໆໃນພື້ນທີ່ທີ່ບໍ່ມີການປະກາດອາດຈະເລີ້ມໂດຍມິດຊັນນາລີ ທີ່ໄດ້ຮັບການຊ່ວຍເຫລືອຈາກຕ່າງປະເທດ, ຈາກຄຣິສຕະຈັກທີ່ປະເທດ ຫລືຈາກຄຣິສຕະຈັກແມ່ ແຕ່ເມື່ອພວກເຂົາເຕີບໃຫຍ່ ແລະລ້ຽງດູຕົວເອງ ແລະພັດທະນາຜູ້ນຳທ້ອງຖິ່ນໄດ້ກໍຈະເຮັດໃຫ້ພວກເຂົາເປັນຖານສຳລັບ ການຂະຫຍາຍໂດຍບໍ່ມີຂີດຈຳກັດໄດ້.

GCI

# VIII. ການບຸກເບີກຄຣິສຕະຈັກໂດຍຄົນທ້ອງຖິ່ນ

## *ກ. ຫລັກການບຸກເບີກຄຣິສຕະຈັກໂດຍຄົນທ້ອງຖິ່ນ*

1. ປະກາດພະກິດຕິຄຸນຕໍ່ຄົນຂອງຕົນເອງ.

2. ໃຊ້ຮູບແບບວັດທະນາທຳທີ່ຖືກຕ້ອງສຳລັບພວກເຂົາ.

3. ໃຊ້ເຫດຜົນທີ່ຕໍ່ຄວາມກັບພວກເຂົາ.

4. ປະຊຸມໃນອາຄານທີ່ເໝາະສົມສຳລັບພວກເຂົາ.

5. ຄົນທ້ອງຖິ່ນນຳກຸ່ມປະຊຸມ.

6. ລ້ຽງດູຕົນເອງ, ປົກຄອງຕົນເອງ, ເຜີຍແຜ່ພະກິດຕິຄຸນເອງ.

7. ອາໃສລິດອຳນາດຂອງພະວິນຍານບໍລິສຸດ.

## *B. Difficulties in Church Planting*

1. **Missionaries' reluctance** to give up authority.

2. **Workers' reluctance** to give up mission support.

3. **Churches' reluctance** to accept financial burden.

4. Small and poor churches **unable to support** their pastor.

5. **Comparing** with neighbouring workers support.

6. **Fear** of persecution, secret Christians, non-growing church. Resistant and hostile areas.

7. **Over-emphasis** on a method whether indigenous of foreign. Inflexible criticism.

<u>List of References</u> :


1. Antioch Blueprint
2. Bush, Andrew. *GCI notes on Church Planting, November 1990.*
3. Halloway, Gerry. *GCI notes on Church Planting.*
4. Hodges, Melvin. *The Indigenous Church*, Gospel Publishing House, Missouri.
5. MacGravan, Donald. *Understanding Church Growth*, Erdmans, Missouri, Grand Rapids.
6. Montgomery, Jim. *DAWN 2000.*
7. Southern Baptist Church Growth Program.
8. Wagner, Peter. *Church Planting for a Greater harvest*, Regal Books, USA. 1990.